# ການກວດກາພືດ ແລະ ຜະລິດຕະພັນພືດທີ່ນຳເຂົ້າ-ສົ່ງອອກ ແລະ ພືດຜ່ານແດນເພື່ອປ້ອງກັນພືດ

# INSPECTION ON PLANTS AND PLANT PRODUCTS FOR IMPORT EXPORT AND COUNTRY PASS PLANTS FOR PLANT QUARANTINE

**ນັກສຶກສາ:** ທ. ຈັນເພັງ ອິນຕະວົງ, ນ. ອິນປັນ ແກ້ວມະນີ
**ອາຈານຊີ້ນຳ:** ວຽງຄຳ ຈັນທະວົງ
**ພາກວິຊາ:** ປູກພືດ, ປີ 2009.

## ບົດຄັດຫຍໍ້

ໃນການລົງຝຶກງານຄັ້ງນີ້ແມ່ນໄດ້ສຶກສາກ່ຽວກັບການກວດກາພືດ ແລະ ຜະລິດຕະພັນພືດທີ່ນຳເຂົ້າ-ສົ່ງອອກ ແລະ ພືດຜ່ານແດນເພື່ອປ້ອງກັນພືດ, ຈຸດປະສົງແມ່ນສຶກສາຂັ້ນຕອນ ແລະ ວິທີການທາງດ້ານເຕັກນິກການກວດກາ ພືດ ແລະ ຜະລິດຕະພັນພືດທີ່ນຳເຂົ້າ - ສົ່ງອອກ ແລະ ຜ່ານແດນ, ເພື່ອກວດຫາຊະນິດຂອງສັດຕູພືດທີ່ຕິດມາກັບ ຜະລິດຕະພັນກະສິກຳ, ເກັບກຳຂໍ້ມູນກ່ຽວກັບພືດ ແລະ ຜະລິດຕະພັນພືດທີ່ນຳເຂົ້າ- ສົ່ງອອກ ແລະ ພືດຜ່ານແດນ. ສຳລັບການກວດກາພືດຄັ້ງນີ້ ແມ່ນໄດ້ປະຕິບັດຢູ່ດ່ານກັກກັນພືດຫ້ວຍຊາຍ ແຂວງ ບໍ່ແກ້ວໄລຍະເວລາໃນການສຶກສາ ທັງໝົດ 4 ເດືອນ ເລີ່ມຕັ້ງແຕ່ວັນທີ 9/3/2009-25/6/2009. ວິທີການສຳລັບການກວດກາພືດນຳເຂົ້າ ແມ່ນກວດ ເອກະສານທີ່ກ່ຽວຂ້ອງ ເຊັ່ນ: ກວດໃບຢັ້ງ ຢືນສຸຂານາໄມພືດ ແລະ ເອກະສານທີ່ກ່ຽວຂ້ອງຊຶ່ງອອກໃຫ້ໂດຍປະເທດຕົ້ນ ທາງ ຈາກນັ້ນຈຶ່ງກວດກາຜະລິດຕະພັນພືດທີ່ເປັນສິນຄ້ານຳເຂົ້າ ດ້ວຍວິທີການສັງເກດດ້ວຍຕາເປົ່າ ຫຼັງຈາກນັ້ນກໍ່ ໄດ້ສຸ່ມເອົາຕົວຢ່າງຕາມຫຼັກການຂອງ ISTA 1985, ກວດກາໂດຍໃຊ້ແວ່ນຂະຫຍາຍ ແລະ ນຳຕົວຢ່າງໄປກວດວິໄຈ ໃນຫ້ອງທົດລອງຕາມເຕັກນິກການກວດພະຍາດ ແລະ ແມງໄມ້ສັດຕູພືດ, ເຕັກນິກການກວດກາຄວາມງອກຂອງເມັດ ພັນ ແລະ ເຕັກນິກການວັດແທກຄວາມຊຸ່ມ. ວິທີການກວດກາພືດສົ່ງອອກ ແມ່ນໄດ້ກວດຕາມເງື່ອນໄຂຄວາມ ຕ້ອງການຂອງປະເທດປາຍທາງແລ້ວອອກໃບຢັ້ງຢືນສຸຂານາໄມພືດໃຫ້ ສຳລັບເຕັກນິກການສຸ່ມຕົວຢ່າງ ແລະ ຂັ້ນຕອນການກວດແມ່ນປະຕິບັດຄືກັນກັບການກວດກາພືດນຳເຂົ້າ. ການກວດກາພືດຜ່ານແດນກໍ່ເຮັດວິທີດຽວກັບ ການກວດກາການນຳເຂົ້າ ແລະ ສົ່ງອອກ.

ຜ່ານການກວດກາພືດ ແລະ ຜະລິດຕະພັນພືດສຳລັບນຳເຂົ້າ - ສົ່ງອອກ ແລະ ຜ່ານແດນ ຜົນໄດ້ຮັບມີຄື: ການ ກວດກາພືດນຳເຂົ້າລວມທັງໝົດ 4 ຄັ້ງ ໃນນັ້ນ ກວດແນວພັນສາລີ 2 ຄັ້ງ ແລະ ເຂົ້າຫອມມະລິຈຳນວນ 2 ຄັ້ງ ; ພືດສົ່ງ ອອກກວດທັງໝົດ11 ຄັ້ງ ມີພືດທັງໝົດ 4 ຊະນິດ, ໃນນັ້ນໄດ້ກວດກາເຂົ້າສານໜຽວ, ດອກເຂັມ, ສາລີ ແລະ ປໍສາ. ສຳລັບພືດຜ່ານແດນໄດ້ກວດທັງໝົດ 21 ຄັ້ງ ມີພືດ 6 ຊະນິດ ໃນນັ້ນ ໄດ້ກວດກາຜັກສົດ, ດອກກຸຫຼາບ, ດອກກ້ວຍ ໄມ້, ໝາກຂາມ, ໝາກສີດາ ແລະ ໝາກກ້ຽງໃຫຍ່. ຜົນການກວດໃນແຕ່ລະຄັ້ງທັງສິນຄ້າທີ່ນຳເຂົ້າ-ສົ່ງອອກ ແລະ ຜ່ານແດນ ເຫັນວ່າບໍ່ພົບພະຍາດ ແລະ ແມງໄມ້ສັດຕູພືດ.